*Souphanouvong University Journal of Multidisciplinary Research anddevelopment*
*2025, Vol. 11, Special Issue, 265-271*
*https://doi.org/10.69692/SUJMRD11Special265*

# A Study of the Teaching and Learning English in the State Primary Schools in Luang Prabang District, Luang Prabang Province

**Somchit PHANTHACHIT[1], Bounthieng VONGSOUANGTHAM[2], Somchay MAKESAVANH[3], Phonesavanh Vandalak[4], Fongmany ONSENGTAVANH[5]**

*Department of Education and Development, Faculty of Education, Souphanouvong University, Lao PDR*

***Correspondence:** Somchit PHANTHACHIT, Department of Program in Education and Development, Faculty of Education, Souphanouvong University
Tel: +856 20 7793 6473,
E-mail: somchitphanthachit2@gmail.com

***Article Info:***
***Submitted: November 20, 2025***
***Revised: December 10, 2025***
***Accepted: December 18, 2025***

**Abstract**

This study aimed to investigate the current conditions of English language teaching and learning at the primary education level, Grades 3-5, in Luang Prabang City, Luang Prabang Province. A quantitative research approach was employed. The sample consisted of 80 primary school teachers teaching Grades 3-5 from 22 state primary schools. The research instrument used for data collection was a five-level rating scale questionnaire focusing on four English language skills: listening, speaking, reading, and writing. Data were analyzed using the Statistical Package for the Social Sciences (SPSS) to calculate the mean and standard deviation.

The research findings revealed that: The overall English teaching and learning situation of primary school students in Grades 3-5 in Luang Prabang City, Luang Prabang Province, was at a middle level, with a mean score of 3.15 and a standard deviation of 0.75. Among the four language skills, listening had the highest mean score ($\overline{X}$ = 3.60; S.D = 0.77), followed by speaking ( $\overline{X}$ = 3.30; S.D = 0.67), and reading ( $\overline{X}$ = 3.24; S.D = 0.87). Writing had the lowest mean score, with ( $\overline{X}$ = 2.47; S.D = 0.68)

**Keywords:** study, teaching and learning English, state primary school

## 1. ພາກສະເໜີ

ພາສາອັງກິດເປັນພາສາສາກົນທີ່ມີບົດບາດສຳຄັນຫຼາຍໃນການສື່ສານ, ການສຶກສາ, ເສດຖະກິດ, ແລະ ການພັດທະນາໃນຍຸກໂລກາພິວັດ. ໃນ ສປປ ລາວ, ລັດຖະບານໄດ້ຮັບຮູ້ເຖິງຄວາມສຳຄັນຂອງພາສາອັງກິດ ແລະ ໄດ້ມີການບັນຈຸພາສາອັງກິດເຂົ້າໃນຫຼັກສູດການຮຽນ-ການສອນ ເລີ່ມແຕ່ລະດັບປະຖົມສຶກສາ. ການສອນພາສາອັງກິດໃນລະດັບປະຖົມສຶກສາແມ່ນມີຄວາມສຳຄັນຫຼາຍ ເພາະເປັນການສ້າງຄວາມຮູ້ພື້ນຖານທີ່ແຂງແຮງໃຫ້ແກ່ຜູ້ຮຽນ ໃນການພັດທະນາທັກສະພາສາອັງກິດ. ການເລີ່ມຕົ້ນຮຽນພາສາອັງກິດແຕ່ອາຍຸຍັງນ້ອຍຈະຊ່ວຍໃຫ້ເດັກນ້ອຍມີຄວາມຄຸ້ນເຄີຍ ຈື່ຈຳພາສາໄດ້ດີ, ສ້າງຄວາມສົນໃຈ ແລະ ພັດທະນາການອອກສຽງທີ່ຖືກຕ້ອງ (Ang, 2015).

ການສອນພາສາອັງກິດ ຊັ້ນປະຖົມມີເປົ້າໝາຍໃຫ້ຜູ້ຮຽນໄດ້ຮຽນຮູ້ກ່ຽວກັບສຽງ, ການປະສົມສຽງ, ທັກສະພາສາທີ່ຈຳເປັນ, ຄຳສັບ ແລະ ໄວຍາກອນສຳລັບນັກຮຽນໃນຂັ້ນເລີ່ມຕົ້ນ, ການນຳໃຊ້ພາສາໃນການສື່ສານ, ການສົນທະນາ ໂດຍເນັ້ນໃສ່ການພັດທະນາທັກສະການຟັງ ແລະ ເວົ້າ ເພື່ອສ້າງໂອກາດໃຫ້ນັກຮຽນ ໄດ້ມີການສື່ສານທາງພາສາເວົ້າ ເພື່ອເປັນພື້ນຖານໃຫ້ແກ່ທັກສະການອ່ານ ແລະ ການຂຽນ ເຊິ່ງແຕ່ລະຂັ້ນຮຽນ ປະກອບມີ 7 ຫົວຂໍ້ (Units) 29 ບົດ (Lessons) (Ministry of Education and sports, 2022) ພ້ອມດຽວກັນນັ້ນ, ວິຊາພາສາອັງກິດ ຊັ້ນປະຖົມ ປີທີ 3-5 ເປັນວິຊາໜຶ່ງທີ່ມີຄວາມສຳຄັນ ແລະ ຈຳເປັນທີ່ສຸດສຳລັບນັກຮຽນຊັ້ນປະຖົມ ມີຈຸດມຸ້ງໝາຍເພື່ອພັດທະນາທັກສະທາງພາສາໃຫ້ແກ່ນັກຮຽນ ໂດຍອີງໃສ່ລະບົບການສຶກ

*Copyright © 2025 by the Authors. Published by Souphanouvong University. This is an open access article under the CC BY-NC-ND license (http://creativecommons.org/licenses/by-nc-nd/4.0/*

ສາໃນໂຮງຮຽນຂອງລາວ ການຈັດການຮຽນ-ການສອນ ເປັນລະບົບພາກປົກກະຕິ, ມີການກຳນົດເວລາຮຽນ, ເນື້ອໃນຫຼັກສູດທີ່ຖືກຕ້ອງຕາມມາດຕະຖານການສຶກສາແຫ່ງຊາດເຊິ່ງປະກອບດ້ວຍ ການສຶກສາກ່ອນໄວຮຽນ, ສາມັນສຶກສາ, ອາຊີວະສຶກສາ ແລະ ການສຶກສາຊັ້ນສູງ.

ທ່ານ ລັດທະຍອດ (2023) ຮອງຜູ້ອຳນວຍການ ສວສ ໄດ້ກ່າວວ່າ: ພາສາອັງກິດ ເປັນສ່ວນໜຶ່ງຂອງຫຼັກສູດປະຖົມສຶກສາ ແລະ ຄູທຸກຄົນຕ້ອງໄດ້ສອນ. ເນື່ອງຈາກວ່າ, ພາສາອັງກິດ ແມ່ນພາສາສາກົນທີ່ນຳໃຊ້ເພື່ອສື່ສານລະຫວ່າງບັນດາປະເທດໃນໂລກ ແລະ ຖືກນຳໃຊ້ເປັນພາສາຫລັກ ເພື່ອດຳເນີນການປະຕິບັດງານ ຂອງບັນດາອຸປະກອນເພື່ອການສື່ສານທີ່ທັນສະໄໝເຊັ່ນ: ຄອມພິວເຕີ, ໂທລະສັບມືຖື, ຊ໋ອບແວ ແລະ ອື່ນໆ. ສະນັ້ນ, ເພື່ອໃຫ້ສາມາດເຂົ້າເຖິງ ແລະ ມີສ່ວນຮ່ວມໃນສັງຄົມປັດຈຸບັນ, ນັກຮຽນຈຳເປັນຕ້ອງໄດ້ພັດທະນາທັກສະດ້ານພາສາອັງກິດຂອງຕົນຜ່ານການເວົ້າ, ຟັງ, ອ່ານ ແລະ ຂຽນ, ຖ້າເຂົ້າໃຈພາສາອັງກິດລະດັບພື້ນຖານແລ້ວ, ນັກຮຽນຈະມີໂອກາດຮຽນໃນຫຼາຍສາວິຊາ ແລະ ເຂົ້າບັນຈຸເຮັດວຽກໃນອະນາຄົດ. ດັ່ງນັ້ນ, ກະຊວງສຶກສາທິການ ແລະ ກິລາ ຈຶ່ງໄດ້ມີຫຼັກສູດສຳລັບຊັ້ນປະຖົມສຶກສາ ທີ່ເລີ່ມຕົ້ນຮຽນພາສາອັງກິດນັບແຕ່ຊັ້ນ ປ. 3 ຂຶ້ນໄປ, ແຕ່ການສອນພາສາຕ່າງປະເທດຍັງເປັນສິ່ງທ້າທາຍສຳລັບຄູ.

ບົດສະຫຼຸບ ປະຈຳສົກຮຽນ 2024-2025 ຂອງຫ້ອງການສຶກສາທິການ ແລະ ກິລານະຄອນຫຼວງພະບາງອັດຕາ ເຂົ້າຮຽນຊັ້ນປະຖົມຫຼຸດລົງ ແລະ ມີການປະລະການຮຽນເພີ່ມຂຶ້ນ ຈາກ 2023-2024 ແມ່ນ 1,3% ມາເປັນ 1,4% ໃນສົກຮຽນ 2024-2025 ແລະ ຜົນການຮຽນຂອງນັກຮຽນຊັ້ນປະຖົມສຶກສາ ທີ່ສອບເສັງໄດ້ 98,46% ເຖິງແມ່ນວ່າຜົນສຳເລັດການຈັດຕັ້ງປະຕິບັດຈະໄດ້ຮັບຜົນຫຼາຍກໍ່ຕາມ ແຕ່ຍັງມີບາງດ້ານທີ່ຕ້ອງພັດທະນາເຊັ່ນ: ຄູຈຳນວນໜຶ່ງຍັງບໍ່ເຂົ້າໃຈກ່ຽວກັບວິທີການສອນພາສາອັງກິດ ເຮັດໃຫ້ການສິ່ງຄວາມຮູ້ຂອງຄູຍັງມີລັກສະນະຈຳກັດ, ການອະທິບາຍບົດຮຽນຍັງບໍ່ກ້ວາງຂວາງ ເຊິ່ງສະແດງອອກການເຮັດກິດຈະກຳໃນການອ່ານ ແລະ ການຂຽນຂອງນັກຮຽນຍັງບໍ່ທັນໄດ້ດີ ແລະ ນັກຮຽນຈຳນວນໜຶ່ງມັກຂາດຮຽນ ເຮັດໃຫ້ຜົນການຮຽນຕ່ຳ. (ຫ້ອງການສຶກສາທິການ ແລະ ກິລາ ນະຄອນຫຼວງພະບາງ, 2025)

ການອ່ານເປັນສິ່ງທີ່ມີຄວາມສຳຄັນ ແລະ ຖືເປັນຄວາມຈຳເປັນຂັ້ນພື້ນຖານທີ່ສຳຄັນຢ່າງຫຍິ່ງທີ່ຈະຊ່ວຍໃຫ້ບຸກຄົນເກີດຄວາມງອກງາມທາງດ້ານສະຕິປັນຍາ, ສາມາດຕິດຕາມການເຄື່ອນໄຫວ, ຄວາມກ້າວໜ້າທັນຕໍ່ ເຫດການ ຕ່າງໆທີ່ມີການປ່ຽນແປງຢູ່ຕະຫຼອດເວລາ, ເພາະການອ່ານເປັນເຄື່ອງມືທີ່ຈະຊ່ວຍໃຫ້ບຸກຄົນມີຄວາມຮູ້ຄວາມສາມາດ, ເຊິ່ງຈະສົ່ງຜົນໃຫ້ບຸກຄົນປະສົບຜົນສຳເລັດໃນການດຳລົງຊີວິດ , ນອກຈາກການອ່ານສາມາດພັດທະນາ ບຸກຄົນແລ້ວ ຍັງຊ່ວຍພັດທະນາສັງຄົມ ແລະ ປະເທດຊາດອີກດ້ວຍ (HATSADY, 2022).

ຈາກສິ່ງທີ່ກ່າວມາຂ້າງເທິງນັ້ນ ຜູ້ຄົ້ນຄວ້າຈຶ່ງມີຈຸດປະສົງເພື່ອສຶກສາສະພາບການຮຽນພາສາອັງກິດ ໃນ 4 ທັກສະ ຂອງນັກຮຽນຊັ້ນປະຖົມສຶກສາ ປີທີ 3-5 ໃນນະຄອນຫຼວງພະບາງ, ແຂວງຫຼວງພະບາງ ເພື່ອນຳໄປເປັນແນວທາງການປັບປຸງການຮຽນ-ການສອນໃຫ້ດີຂຶ້ນໃນຕໍ່ໜ້າ.

## 2. ອຸປະກອນ ແລະ ວິທີການ

### 2.1 ກຸ່ມເປົ້າໝາຍ

ກຸ່ມເປົ້າໝາຍທີ່ໃຊ້ໃນການຄົ້ນຄວ້າຄັ້ງນີ້ ແມ່ນຄູສອນຊັ້ນປະຖົມສຶກສາ ປີທີ 3-5 ທີ່ໂຮງຮຽນປະຖົມສຶກສາຂອງລັດ ໃນນະຄອນຫຼວງພະບາງ ແຂວງຫຼວງພະບາງ ຈຳນວນ 80 ຄົນ, ເຊິ່ງປະກອບມີ 22 ແຫ່ງ.

### 2.2 ເຄື່ອງມື ແລະ ວິທີການສ້າງເຄື່ອງມື

ເຄື່ອງມືທີ່ໃຊ້ໃນການຄົ້ນຄວ້າຄັ້ງນີ້ ແມ່ນແບບສອບ ເຊິ່ງປະກອບມີ 2 ພາກສ່ວນຄື: ສ່ວນທີ 1: ຄຳຖາມກ່ຽວກັບຂໍ້ມູນທົ່ວໄປຂອງຄູສອນ ຊັ້ນ ປີທີ 5 ເປັນແບບໝາຍຕິກ ☑ ໃນບ່ອກທີ່ກຳນົດໄວ້ເຊິ່ງປະກອບມີຈຳນວນ 4 ຂໍ້ ຄື: ເພດ, ວຸດທິການສຶກສາ, ປະສົບການສອນ ແລະ ການຝຶກອົບຮົມ.

ສ່ວນທີ 2: ຄຳຖາມກ່ຽວກັບສະພາບການຮຽນ-ການສອນພາສາອັງກິດ ຊັ້ນປະຖົມສຶກສາ ປີທີ 3-5 ມີ 4 ດ້ານ ປະກອບມີ 19 ຂໍ້ ຄື: ດ້ານການຟັງ ຈຳນວນ 5 ຂໍ້, ດ້ານການເວົ້າ ຈຳນວນ 5 ຂໍ້, ດ້ານການອ່ານ ຈຳນວນ 5 ຂໍ້ ແລະ ດ້ານການຂຽນ ຈຳນວນ 4 ຂໍ້. ແບບສອບຖາມເປັນລັກສະນະມາດຕາສ່ວນປະເມີນຄ່າ (Rating Scale) ມີ 5 ລະດັບຕາມວິທີຂອງ Likert Scale (Sisaat, 2017) ໂດຍກຳນົດການໃຫ້ຄະແນນດັ່ງນີ້:

ຄະແນນ 5 ໝາຍຄວາມວ່າ ດີທີ່ສຸດ

ຄະແນນ 4 ໝາຍຄວາມວ່າ ດີ

ຄະແນນ 3 ໝາຍຄວາມວ່າ ປານກາງ

ຄະແນນ 2 ໝາຍຄວາມວ່າ ໜ້ອຍ

ຄະແນນ 1 ໝາຍຄວາມວ່າ ໜ້ອຍທີ່ສຸດ

### 2.3 ວິທີການສ້າງ ແລະ ຊອກຫາຄຸນນະພາບຂອງເຄື່ອງມື

1) ການທົດສອບຄວາມທ່ຽງຕົງ (Validity) ຜູ້ຄົ້ນຄວ້ານຳແບບສອບຖາມໄປສະເໜີນຳອາຈານທີ່ປຶກສາ ເພື່ອກວດສອບຄວາມຖືກຕ້ອງ ແລະ ໂຄງສ້າງຂອງແບບສອບຖາມ ປັບປຸງແກ້ໄຂຕາມການແນະນຳຂອງຄູທີ່ປຶກສາ. ຈາກນັ້ນ, ຜູ້ຄົ້ນຄວ້າໄດ້ນຳເອົາແບບສອບຖາມສະເໜີໃຫ້ຜູ້ຊ່ຽວຊານ ຈຳນວນ 3 ທ່ານ ເພື່ອພິຈາລະນາ ແລະ ກວດສອບຄວາມທ່ຽງຕົງດ້ານເນື້ອໃນ. ຈາກນັ້ນນຳມາວິເຄາະຄ່າດັດສະນີຄວາມສອດຄ່ອງ (IOC) (Phonphotthanamat, 2021) ໂດຍນຳໃຊ້ສູດດັ່ງລຸ່ມນີ້:

ສູດຄິດໄລ່: $IOC = \frac{\Sigma R}{N}$

ໃນນີ້ IOC ແທນຄ່າຄວາມສອດຄ່ອງ

ΣR ແທນຜົນບວກຂອງຄະແນນຄວາມຄິດເຫັນ ຂອງຜູ້ຊ່ຽວຊານ

N ຈຳນວນຜູ້ຊ່ຽວຊານ

ຈາກນັ້ນ, ກໍນຳເອົາຜົນການຈາກການປະເມີນຄ່າດັດສະນີຄວາມສອດຄ່ອງ (IOC) ໄປສະເໜີຕໍ່ຄູທີ່ປຶກສາ ເພື່ອພິຈາລະນາຂໍ້ຄຳຖາມທີ່ມີຄ່າດັດສະນີຄວາມສອດຄ່ອງ ຫຼື ຄ່າ IOC ຕັ້ງແຕ່ 0.50 ຂຶ້ນໄປ ສະແດງວ່າຂໍ້ຄຳຖາມນັ້ນແມ່ນມີຄວາມສອດຄ່ອງກັບເນື້ອໃນ ແລະ ສາມາດນຳໄປທົດສອບກັບກຸ່ມຕົວຢ່າງ ເຊິ່ງຜົນການທົດສອບພົບວ່າ ຂໍ້ຄຳຖາມທຸກຂໍ້ມີຄ່າດັດສະນີຄວາມສອດຄ່ອງຢູ່ລະຫວ່າງ 0.66 - 1.00 ສາມາດນຳໄປທົດສອບກັບກຸ່ມເປົ້າໝາຍ

2) ການທົດສອບຄ່າຄວາມເຊື່ອໝັ້ນ (Reliability) ຜູ້ຄົ້ນຄວ້າໄດ້ນຳແບບສອບຖາມໄປທົດລອງໃຊ້ (Try Out) ກັບຄູທີ່ສອນປະຖົມສຶກສາທີ່ບໍ່ແມ່ນກຸ່ມຕົວຢ່າງ ຈຳນວນ 30 ຊຸດ. ຈາກນັ້ນ, ກໍນຳມາບັນທຶກໃນໂປຣແກມ Microsoft Excel ແລ້ວໄປວິເຄາະຂໍ້ມູນໂດຍໃຊ້ໂປຣແກມ (IBM SPSS version 26) ເພື່ອຄຳນວນຫາຄ່າຄວາມເຊື່ອໝັ້ນ (Reliability) ຂອງແບບສອບຖາມ ໂດຍຫາຄ່າສຳປະສິດ Cronbach's Alpha Coefficient ເຊິ່ງໄດ້ຄ່າຄວາມເຊື່ອໝັ້ນທັງຊຸດເທົ່າກັບ 0.94. ຈາກນັ້ນ, ໄດ້ນຳແບບສອບຖາມມາປັບປຸງເປັນສະບັບສົມບູນເພື່ອນຳສະເໜີ ອາຈານທີ່ປຶກສາອີກຄັ້ງໜຶ່ງ ແລ້ວນຳໄປເກັບຂໍ້ມູນຕົວຈິງຈາກກຸ່ມຕົວຢ່າງ.

**2.4 ວິທີການເກັບກຳ ແລະ ລວບລວມຂໍ້ມູນ**

ຜູ້ຄົ້ນຄວ້າໄດ້ ຂໍໜັງສືສະເໜີຈາກຄະນະສຶກສາສາດ ມະຫາວິທະຍາໄລ ສຸພານຸວົງ ສະເໜີຕໍ່ຫ້ອງການສຶກສາທິການ ແລະ ກິລານະຄອນຫຼວງພະບາງ, ເພື່ອຂໍອະນຸຍາດ ໃນການເກັບກຳຂໍ້ມູນ ຈາກກຸ່ມເປົ້າໝາຍ. ຈາກນັ້ນຜູ້ຄົ້ນຄວ້າໄດ້ນຳໜັງສືຂໍອະນຸຍາດ ແລະ ຂໍຄວາມຮ່ວມມື ໃນການຕອບແບບສອບຖາມລົງໄປສູ່ໂຮງຮຽນຊັ້ນປະຖົມສຶກສາ ແລ້ວເຂົ້າພົບຜູ້ອຳນວຍການໂຮງຮຽນ ແຈ້ງຈຸດປະສົງ ແລະ ຂໍຄວາມຮ່ວມມືຈາກຄູທີ່ສອນຢູ່ຊັ້ນ ປ.5 ເພື່ອຕອບແບບສອບຖາມ ໂດຍໃຊ້ເວລາປະມານ 2 ອາທິດ ເພື່ອໃຫ້ຄູຕອບແບບສອບຖາມ. ຫຼັງຈາກຄູຕອບແບບສອບຖາມສຳເລັດແລ້ວ ຜູ້ຄົ້ນຄວ້າໄດ້ລົງໄປເກັບເອົາແບບສອບຖາມຄືນ ເພື່ອມາກວດສອບຄວາມສົມບູນຂອງແບບສອບຖາມ ແລະ ສັງລວມຄືນ. ຈາກນັ້ນກໍມາວິເຄາະຂໍ້ມູນ ໂດຍນຳໃຊ້ສະຖິຕິຄິດໄລ່ທີ່ກຳນົດໄວ້ໃນຂັ້ນຕໍ່ໄປ.

**2.5 ສະຖິຕິທີ່ໃຊ້ໃນການວິເຄາະ**

**2.5.1 ສະຖິຕິທີ່ໃຊ້ຄິດໄລ່ເປີເຊັນຕາມສູດຄິໄລ່ຂອງ** (Sisaat, 2012)

$$P = \frac{f}{N} \times 100\%$$

ເຊິ່ງວ່າ: $P$ ໝາຍເຖິງເປີເຊັນ

$f$ ໝາຍເຖິງຄວາມຖີ່ຂອງຂອງຜູ້ຕອບແບບສອບຖາມ ແລະ ແບບສັງເກດແຕ່ລະຂໍ້

(ຫຼື ຄວາມຖີ່ຂອງລະດັບຄະແນນໃນການຕອບແບບສອບຖາມ)

$N$ ໝາຍເຖິງຈຳນວນກຸ່ມຕົວຢ່າງທັງໝົດ

**2.5.2 ສະຖິຕິທີ່ໃຊ້ຄິດໄລ່ຄ່າສະເລ່ຍຕາມສູດຂອງ** (Kongchun, 2015)

$\overline{X} = \frac{\sum fx}{N}$ ເຊິ່ງວ່າ: $\bar{X}$ ແມ່ນຄ່າສະເລ່ຍຂອງນ້ຳໜັກຄະແນນ

$X$ ແມ່ນນ້ຳໜັກຂອງຄະແນນ.

$f$ ແມ່ນຄວາມຖີ່ຂອງກຸ່ມຕົວຢ່າງ.

$N$ ແມ່ນຈຳນວນຂອງກຸ່ມຕົວຢ່າງ

$\sum fx$ ແມ່ນຜົນບວກຂອງຄວາມຖີ່ຄູນກັບນ້ຳໜັກຄະແນນ

**2.5.3 ສະຖິຕິທີ່ໃຊ້ຄິດໄລ່ຄ່າຜັນປ່ຽນມາດຖານຕາມສູດຂອງ** (Wongwanich, 2013)

$$SD = \sqrt{\frac{N\sum fx^2 - (\sum fx)^2}{N(N-1)}}$$

$SD$ ແມ່ນຄ່າຜັນປ່ຽນມາດຖານ

$x$ ແມ່ນນ້ຳໜັກຂອງຄະແນນ

$f$ ແມ່ນຄວາມຖີ່ຂອງກຸ່ມຕົວຢ່າງ

$(\sum fx)^2$ ແມ່ນຜົນລວມຂອງຄວາມຖີ່ຂອງກຸ່ມຕົວຢ່າງຄູນກັບນ້ຳໜັກຂອງອັນດັບຄະແນນທັງໝົດ ຂຶ້ນກຳລັງສອງ

$\sum fx$ ແມ່ນຜົນບວກຂອງຄວາມຖີ່ຂອງກຸ່ມຕົວຢ່າງຄູນອັນດັບຄະແນນກຳລັງສອງ.

$N$ ແມ່ນຈຳນວນຄະແນນໃນກຸ່ມຕົວຢ່າງ

**2.6 ການວິເຄາະຂໍ້ມູນ**

ສ່ວນທີ 1. ວິເຄາະຂໍ້ມູນກ່ຽວກັບຄຸນລັກສະນະສ່ວນຕົວ ເຊິ່ງສະຖິຕິທີ່ໃຊ້ແມ່ນ ຄ່າຄວາມຖີ່ (Frequency), ຄ່າສະເລ່ຍ ($\bar{X}$) ແລະ ຄ່າສ່ວນຮ້ອຍ (Percentage) ແລ້ວນຳສະເໜີເປັນຕາຕະລາງ ພ້ອມປະກອບຄຳບັນຍາຍ.ສ່ວນທີ 2. ວິເຄາະຂໍ້ມູນກ່ຽວກັບສະພາບການຮຽນ-ການສອນ ວິຊາພາສາອັງກິດ ໂດຍໃຊ້ລັກສະນະມາດຕາສ່ວນປະເມີນຄ່າ (Rating Scale) 5 ລະດັບ ຕາມວິທີຂອງ Likert Scale ສະຖິຕິທີ່ໃຊ້ແມ່ນຄ່າສະເລ່ຍ ($\bar{X}$) ແລະ ຄ່າຜັນປ່ຽນມາດຕະຖານ (S.D) ແລ້ວນຳສະເໜີເປັນຕາຕະລາງ ພ້ອມຄຳບັນຍາຍ. ຜູ້ຄົ້ນຄວ້າໄດ້ກຳນົດເກນຄະແນນທີ່ໃຊ້ໃນການວິເຄາະຂໍ້ມູນຄື:

ຄະແນນ 4.51-5.00 ໝາຍເຖິງ ໃນລະດັບດີຫຼາຍ

ຄະແນນ 3.51-4.50 ໝາຍເຖິງ ຢູ່ໃນລະດັບດີ

ຄະແນນ 2.51-3.50 ໝາຍເຖິງ ໃນລະດັບປານກາງ

ຄະແນນ 1.51-2.50 ໝາຍເຖິງ ຢູ່ໃນລະດັບໜ້ອຍ

ຄະແນນ 1.00-1.50 ໝາຍເຖິງ ຢູ່ໃນລະດັບໜ້ອຍທີ່ສຸດ

**3. ຜົນໄດ້ຮັບ**

ຜົນການຄົ້ນຄວ້າສຶກສາສະພາບການຮຽນ-ການສອນພາສາອັງກິດ ຊັ້ນປະຖົມສຶກສາຂອງລັດ ໃນນະຄອນຫຼວງພະບາງ, ແຂວງຫຼວງພະບາງ ພົບວ່າ: ຄຸນລັກສະນະສ່ວນຕົວຂອງຄູສອນຊັ້ນປະຖົມສຶກສາ ປີທີ 5 ສ່ວນໃຫຍ່ແມ່ນເພດຍິງ ຈຳນວນ 64 ຄົນ ເທົ່າກັບ 80%, ຮອງລົງມາເພດຊາຍ ຈຳນວນ 16 ຄົນ ເທົ່າກັບ 20%. ວຸດທິການສຶກສາສ່ວນໃຫຍ່ແມ່ນ ຊັ້ນສູງ ຈຳນວນ 44 ຄົນ ເທົ່າກັບ 55%, ຮອງລົງມາແມ່ນຊັ້ນກາງ ຈຳນວນ 26 ຄົນ ເທົ່າກັບ 32.5% ແລະ ວຸດທິການສຶກສາຊັ້ນປະລິນຍາຕີ ຈຳນວນ 10 ຄົນ ເທົ່າກັບ 12.5%. ປະສົບການສອນພາສາອັງກິດສ່ວນໃຫຍ່ແມ່ນ 10 ປີລົງມາ ມີຈຳນວນ 52 ຄົນ ເທົ່າກັບ 65%, ຮອງລົງມາແມ່ນ ປະສົບການໃນລະຫວ່າງ 11-20 ປີ ຈຳນວນ 20 ຄົນ ເທົ່າກັບ 25% ແລະ 21 ປີຂຶ້ນໄປ ຈຳນວນ 8 ຄົນ ເທົ່າກັບ 10% ແລະ ຄູສອນທີ່ເຄີຍເຂົ້າຮ່ວມຝຶກອົບຮົມການສອນພາສາອັງກິດຈຳນວນ 72 ຄົນ ເທົ່າກັບ 90% ແລະ ບໍ່ເຄີຍເຂົ້າຮ່ວມຝຶກອົບຮົມການສອນວິຊາພາສາອັງກິດ ຈຳນວນ 8 ເທົ່າກັບ 10%. ແລະ ສະພາບການຮຽນ-ການສອນພາສາອັງກິດ ຂອງນັກຮຽນຊັ້ນປະຖົມສຶກສາ ປີທີ 3-5 ໂດຍລວມແມ່ນຢູ່ໃນລະດັບປານກາງ ($\overline{X}$ = 3.15; S.D = 0.75); ແຕ່ເມື່ອພິຈາລະນາເປັນລາຍດ້ານພົບວ່າ ການຮຽນວິຊາພາສາອັງກິດ ຂອງນັກຮຽນ ດ້ານທີ່ມີຄ່າສະເລ່ຍສູງກວ່າໝູ່ ແມ່ນດ້ານການຟັງ ($\overline{X}$ = 3.60; S.D=0.77) ເມື່ອທຽບໃສ່ເກນແມ່ນຢູ່ໃນລະດັບດີ; ຮອງລົງມາແມ່ນດ້ານການເວົ້າ ( $\overline{X}$ = 3.30; S.D=0.67) ເມື່ອທຽບໃສ່ເກນແມ່ນຢູ່ໃນລະດັບປານກາງ, ສ່ວນຂໍ້ທີ່ມີຄ່າສະເລ່ຍຕ່ຳສຸດແມ່ນດ້ານການຂຽນ ມີຄ່າສະເລ່ຍ ( $\overline{X}$ = 2.47; S.D=0.68) ເມື່ອທຽບໃສ່ເກນແລ້ວເຫັນວ່າຢູ່ໃນລະດັບໜ້ອຍ.

**4. ວິພາກຜົນ**

ຜົນການຄົ້ນຄວ້າສະພາບການຮຽນ-ການສອນພາສາອັງກິດ ຊັ້ນ ປ.3-5 ດ້ານການຟັງ ໂດຍລວມພົບວ່າຢູ່ໃນລະດັບດີ. ເນື່ອງຈາກວ່າໃນເວລາປະຕິບັດກິດຈະກຳນັກຮຽນສ່ວນຫຼາຍສາມາດຟັງ ແລະ ປະຕິບັດຕາມຄຳແນະນຳຂອງຄູທີ່ໃຫ້ເວົ້າເປັນພາສາອັງກິດໄດ້ ສະແດງວ່ານັກຮຽນສ່ວນຫຼາຍສາມາດປະຕິບັດຕາມທີ່ຄູແນະນຳໄດ້ດີ ເຮັດໃຫ້ນັກຮຽນກ້າເວົ້າ ແລະ ຮູ້ສຶກວ່າພາສາອັງກິດບໍ່ໄດ້ຍາກເກີນໄປ. ນອກນັ້ນນັກຮຽນຍັງສາມາດເຂົ້າໃຈເພງພາສາອັງກິດສັ້ນໆໄດ້ ສະທ້ອນໃຫ້ເຫັນວ່າວິທີການສອນທີ່ເນັ້ນການໃຊ້ເນື້ອໃນທາງດົນຕີ ຫຼື ເພງ ມີປະສິດທິຜົນຕໍ່ການພັດທະນາທັກສະການຟັງພາສາອັງກິດຂອງນັກຮຽນ ເຊິ່ງສອດຄ່ອງກັບບົດຄົ້ນຄວ້າຂອງ (Soratat et al., 2022) ພົບວ່າການຈັດການຮຽນຮູ້ການພັດທະນາທັກສະການຟັງພາສາອັງກິດໂດຍໃຊ້ເພງພາສາອັງກິດ ມີປະສິດທິພາບມີຄ່າເທົ່າກັບ 82.72/83.06 ເຊິ່ງສູງກວ່າເກນທີ່ກຳນົດໄວ້ຄື 80/80. ໃນການຮຽນການສອນເວລາຄູເວົ້າເປັນພາສາອັງກິດນັກຮຽນບໍ່ເຂົ້າໃຈຄຳສັບ ຫຼື ສຳນວນທີ່ບໍ່ຄຸ້ນເຄີຍ ນັກຮຽນຈະບໍ່ເຂົ້າໃຈຄວາມໝາຍ ນີ້ຈຶ່ງເປັນບັນຫາພື້ນຖານທີ່ພົບໄດ້ໃນການຟັງພາສາອັງກິດ ເຊິ່ງສອດຄ່ອງກັບບົດຄົ້ນຄວ້າຂອງ (Chirandon et al., 2021) ພົບວ່າ ນັກສຶກສາມີບັນຫາໃນການຟັງເມື່ອເນື້ອໃນຂອງຂໍ້ຄວາມໃຊ້ສຳນວນ ຫຼື ປະໂຫຍກທີ່ບໍ່ຄຸ້ນເຄີຍ/ບໍ່ເຂົ້າໃຈຄວາມໝາຍ.

ຜົນການຄົ້ນຄວ້າສະພາບການຮຽນ-ການສອນພາສາອັງກິດ ຊັ້ນ ປ.3-5 ດ້ານການເວົ້າ ໂດຍລວມພົບວ່າຢູ່ໃນລະດັບປານກາງ. ຍ້ອນວ່ານັກຮຽນສາມາດແນະນຳຕົນເອງເປັນພາສາອັງກິດ ແລະ ເວົ້າສຽງຕົວອັກສອນໄດ້ຢ່າງຖືກຕ້ອງ ເຮັດໃຫ້ນັກຮຽນສາມາດນຳຄວາມຮູ້ການອອກສຽງມາສື່ສານກັບໝູ່ເພື່ອນໄດ້ ຈຶ່ງເປັນການສ້າງພື້ນຖານທີ່ສຳຄັນໃນການພັດທະນາທັກສະອື່ນໆຂອງພາສາອັງກິດ ເຊິ່ງສອດຄ່ອງກັບບົດຄົ້ນຄວ້າຂອງ (Manakit, 2022) ພົບວ່າຫຼັງການຈັດການຮຽນຮູ້ເພື່ອພັດທະນາທັກສະການເວົ້າພາສາອັງກິດເພື່ອການສື່ສານໂດຍໃຊ້ເຕັກນິກການຮຽນຮູ້ແບບຮ່ວມມື ສຳລັບນັກຮຽນຊັ້ນມັດທະຍົມສຶກສາປີທີ 3 ນັກຮຽນມີທັກສະການເວົ້າພາສາອັງກິດເພື່ອການສື່ສານຕາມຄວາມສາມາດດ້ານພາສາຂອງສະຫະພາບເອີຣົບ CEFRໃນລະດັບ A2 ທຸກຄົນ. ການຝຶກໃຫ້ນັກຮຽນຖາມ–ຕອບກັນເອງ ເປັນການເພີ່ມທັກສະການສື່ສານ ແລະ ຍັງຊ່ວຍໃຫ້ນັກຮຽນສາມາດຄົ້ນຄິດ ແລະ ເຂົ້າໃຈບົດຮຽນໄດ້ເລິກເຊິ່ງຂຶ້ນກວ່າເກົ່າ ທັງເປັນການພັດທະນາທັກສະການສື່ສານ ຊ່ວຍໃຫ້ນັກຮຽນສ້າງຄວາມເຂົ້າໃຈຮ່ວມກັນ ເຊິ່ງເຮັດໃຫ້ນັກຮຽນສາມາດນຳໃຊ້ຄວາມຮູ້ເຂົ້າໃນສະຖານະການຈິງໄດ້ດີກວ່າເກົ່າ ເຊິ່ງສອດຄ່ອງກັບບົດຄົ້ນຄວ້າຂອງ (Anchalee, 2025) ພົບວ່າຜົນການທົດສອບປະສິດທິພາບແບບຝຶກທັກສະການເວົ້າບົດສົນທະນາພາສາອັງກິດຂອງນັກຮຽນຊັ້ນປະຖົມສຶກສາປີທີ 5 ໂຮງຮຽນເທດສະບານວັດທ່າສະຕອຍ ມີປະສິດທິພາບ 74.26/71.01 ເຊິ່ງສູງກວ່າເກນມາດຕະຖານທີ່ກຳນົດໄວ້.

ຜົນການຄົ້ນຄວ້າສະພາບການຮຽນ-ການສອນພາສາອັງກິດ ຊັ້ນ ປ.3-5 ດ້ານການອ່ານ ໂດຍລວມພົບວ່າຢູ່ໃນລະດັບປານກາງ. ເນື່ອງຈາກວ່າໃນເວລາດຳເນີນການຮຽນການສອນວິຊາພາສາອັງກິດ ເມື່ອຄູໃຫ້ນັກຮຽນລຸກຂຶ້ນອ່ານເຫັນວ່ານັກຮຽນສາມາດອ່ານພະຍັນຊະນະພາສາອັງກິດໄດ້ ສະແດງໃຫ້ເຫັນເຖິງການພັດທະນາຄວາມຮູ້ ທັກສະດ້ານການອ່ານ ແລະ ຄວາມສາມາດຂອງນັກຮຽນໄດ້ຢ່າງຊັດເຈນ ເຮັດໃຫ້ຄວາມຮູ້ຂອງນັກຮຽນມີພັດທະນາການດີຂຶ້ນ ເຊິ່ງສອດຄ່ອງກັບບົດຄົ້ນຄວ້າຂອງ (Phattharaphong-olan, 2018) ພົບວ່າ ນັກສຶກສາມີຜົນທາງການຮຽນດີຂຶ້ນ ພາຍຫຼັງການຮຽນໂດຍໃຊ້ແບບຝຶກທັກສະການອ່ານກ່ອນຮຽນໂດຍໃຊ້ແບບຝຶກທັກສະມີຄະແນນສະເລ່ຍ ( $\overline{X}$ =8.78) ແລະ ຫຼັງຮຽນມີຄະແນນສະເລ່ຍ ( $\overline{X}$ =16.70) ຢ່າງມີລະດັບຄວາມສຳຄັນທາງສະຖິຕິຢູ່ລະດັບ .05 ແລະ ຈາກຜົນການຄົ້ນຄວ້າຍັງພົບວ່ານັກຮຽນສາມາດອ່ານເລື່ອງສັ້ນພາສາອັງກິດໄດ້ແມ່ນຢູ່ໃນລະດັບປານກາງ ສາເຫດຍ້ອນວ່ານັກຮຽນຍັງບໍ່ສາມາດວິເຄາະ ແລະ ໄຈ້ແຍກຄຳສັບໄດ້ ນັກຮຽນສາມາດເຂົ້າໃຈເນື້ອໃນເລື່ອງສັ້ນໄດ້ພຽງລະດັບໜຶ່ງ ແຕ່ຖ້າໄດ້ຮັບການຝຶກອ່ານ ແລະ ຄຳແນະນຳຈາກຄູຢ່າງຕໍ່ເນື່ອງ ນັກຮຽນຈະສາມາດພັດທະນາຈາກລະດັບປານກາງໄປສູ່ລະດັບດີໄດ້ ເຊິ່ງສອດຄ່ອງກັບບົດຄົ້ນຄວ້າຂອງ (Luangsuwan et al., 2023)

ພົບວ່າ ຄວາມສາມາດດ້ານການອ່ານຢ່າງມີວິຈາລະນະຍານຂອງນັກຮຽນຢູ່ໃນລະດັບໜ້ອຍ.

ຜົນການຄົ້ນຄວ້າສະພາບການຮຽນການສອນພາສາອັງກິດ ຊັ້ນ ປ.3-5 ດ້ານການຂຽນ ໂດຍລວມພົບວ່າຢູ່ໃນລະດັບໜ້ອຍ. ສາເຫດເນື່ອງມາຈາກ ນັກຮຽນບໍ່ສາມາດຂຽນຂໍ້ຄວາມ ຫຼື ບັນທຶກສັ້ນໆເປັນພາສາອັງກິດໄດ້ ແລະ ບໍ່ສາມາດຂຽນປະໂຫຍກສັ້ນໆກ່ຽວກັບຕົວເອງໄດ້ ນັກຮຽນຍັງຂາດຄວາມຮູ້ດ້ານຄຳສັບ ແລະ ວະລີ ທີ່ນຳໃຊ້ເຂົ້າໃນການຂຽນປະໂຫຍກ. ສະນັ້ນ, ຈຶ່ງເຮັດປະໂຫຍກມີລັກສະນະສັ້ນເກີນໄປ, ບໍ່ຄົບຖ້ວນ ແລະ ບໍ່ສາມາດບອກຄວາມໝາຍໄດ້ຢ່າງຊັດເຈນ. ເຊິ່ງສອດຄ່ອງກັບບົດຄົ້ນຄວ້າຂອງ (Nurnaningrum et al., 2025) ພົບວ່ານັກຮຽນສ່ວນໃຫຍ່ມີຄວາມຫຍຸ້ງຍາກໃນການຂະຫຍາຍເນື້ອໃນ, ຄວາມຕໍ່ເນື່ອງຂອງເລື່ອງ ແລະ ໄວຍາກອນ. ການວິເຄາະຂໍ້ມູນ (Corpus analysis) ສະແດງໃຫ້ເຫັນບັນຫາທີ່ເກີດຂຶ້ນເລື້ອຍໆ ເຊັ່ນ: ການໃຊ້ວະລີທີ່ບໍ່ຊັດເຈນ, ການໃຊ້ພາສາປົນກັນ (Code-mixing) ແລະ ການຂຽນທີ່ສັ້ນເກີນໄປ ເຊິ່ງສະທ້ອນໃຫ້ເຫັນເຖິງຊ່ອງວ່າງໃນການໃຊ້ຄຳສັບ ແລະ ການສ້າງປະໂຫຍກ. ນອກຈາກນີ້, ຜົນຈາກແບບສອບຖາມຍັງລະບຸວ່າ ນັກຮຽນຈຳນວນຫຼາຍພົບກັບສິ່ງທ້າທາຍໃນຫຼາຍດ້ານ ໂດຍສະເພາະແມ່ນການໃຊ້ຄຳສັບ, ໄວຍາກອນ, ໂຄງສ້າງປະໂຫຍກ ແລະ ການສ້າງຄວາມຄິດ.

ຈາກບັນຫາ ແລະ ຂໍ້ຫຍຸ້ງຍາກທີ່ກ່າວມາຂ້າງເທິງນັ້ນ (Thaosiri et al., 2024) ໄດ້ເຮັດການຄົ້ນຄ້ວາກ່ຽວກັບການສຶກສາສະພາບບັນຫາ ແລະ ຄວາມຕ້ອງການໃນການຈັດການຮຽນ-ການສອນພາສາອັງກິດ ເພື່ອສົ່ງເສີມການຮູ້ຄຳສັບພາສາອັງກິດ ຊັ້ນປະຖົມປີທີ 4 ການສຶກສາຄັ້ງນີ້ພົບວ່າ: 1) ສະພາບບັນຫາຂອງນັກຮຽນໃນການຮຽນຮູ້ພາສາອັງກິດ ເພື່ອສົ່ງເສີມການຮູ້ຄຳສັບພາສາອັງກິດ ອັນດັບສູງສຸດຄືນັກຮຽນບໍ່ກ້າອອກສຽງ ເນື່ອງຈາກຂາດຄວາມໝັ້ນໃຈໃນການອ່ານຄວາມຕ້ອງການໃນການຮຽນຮູ້ພາສາອັງກິດກໍຄືຕ້ອງຝຶກທັກສະການເວົ້າ ໂດຍການຖາມ-ຕອບ ຈາກການສົນທະນາ 2) ສະພາບບັນຫາ ແລະຄວາມຕ້ອງການຈັດການຮຽນຮູ້ພາສາອັງກິດ ຂອງຄູສອນພາສາອັງກິດແມ່ນບັນຫາກ່ຽວກັບການຂາດຄວາມໝັ້ນໃຈໃນການໃຊ້ພາສາອັງກິດເພື່ອການສື່ສານ ແລະ ຄູຕ້ອງໄດ້ພັດທະນາການຈັດການຮຽນ-ການສອນໂດຍໃຊ້ເພງປະກອບການສອນ.

## 5. ສະຫຼຸບ

ຈາກການສຶກສາສະພາບການຮຽນ-ການສອນພາສາອັງກິດ ຊັ້ນປະຖົມສຶກສາປີທີ 3-5 ຈາກຄູສອນຈຳນວນ 80 ຄົນ ໃນນະຄອນຫຼວງພະບາງ, ແຂວງຫຼວງພະບາງ ໃນຂອບເຂດດ້ານຄວາມຮູ້ 4 ທັກສະຄື: ການຟັງ, ການເວົ້າ, ການອ່ານ ແລະ ການຂຽນ ໂດຍລວມຢູ່ໃນລະດັບດປານກາງ. ໂດຍສະເພາະແມ່ນດ້ານການຟັງ ນັກຮຽນສາມາດຟັງ ແລະປະຕິບັດກິດຈະກຳຕາມຄຳແນະນຳຂອງຄູໄດ້ຢ່າງຖືກຕ້ອງ. ໃນນັ້ນ, ດ້ານການເວົ້າ ນັກຮຽນສາມາດເວົ້າອອກສຽງຕົວອັກສອນພາສາອັງກິດ ແລະແນະນຳຕົນເອງເປັນພາສາອັງກິດໄດ້ຢ່າງໝັ້ນໃຈ. ສ່ວນດ້ານການອ່ານນັກຮຽນມີຄວາມສາມາດອ່ານຄຳສັບ ແລະ ພັດທະນາໄປສູ່ການອ່ານປະໂຫຍກສັ້ນໆໄດ້ ແລະ ດ້ານການຂຽນ ຄູຄວນເອົາໃຈໃສ່ ໃຫ້ນັກຮຽນສາມາດຂຽນປະໂຫຍກ ແລະ ຂຽນຂໍ້ຄວາມເປັນພາສາອັງກິດໄດ້.

ສະຫຼຸບລວມແລ້ວເຫັນວ່າ ສະພາບການຮຽນ-ການສອນພາສາອັງກິດ ຂອງນັກຮຽນຊັ້ນປະຖົມສຶກສາໃນນະຄອນຫຼວງພະບາງ, ແຂວງຫຼວງພະບາງ ມີທັກສະການຮຽນຮູ້ທັງ 4 ດ້ານຢູ່ໃນລະດັບກາງ ເຊິ່ງມີຄ່າສະເລ່ຍ $\bar{X}$ = 3.15 ແລະ ຄ່າຜັນປ່ຽນມາດຖານ SD = 0.75.

### 5.1 ຂໍ້ສະເໜີຕໍ່ຜູ້ທີ່ຈະເຮັດການວິໄຈໃນຕໍ່ໜ້າ

ຈາກຜົນການສຶກສາທັກສະພາສາອັງກິດທັງ 4 ດ້ານຄື: ການຟັງ, ການເວົ້າ, ການອ່ານ ແລະ ການຂຽນ ພົບວ່ານັກຮຽນມີການພັດທະນາໃນລະດັບທີ່ດີ ແຕ່ຍັງມີບາງດ້ານທີ່ຄວນໄດ້ຮັບການສົ່ງເສີມຢ່າງຕໍ່ເນື່ອງ. ດັ່ງນັ້ນ, ຄູຜູ້ສອນຄວນອອກແບບກິດຈະກຳການຮຽນການສອນທີ່ບູລະນາການທັກສະທັງ 4 ດ້ານເຂົ້າດ້ວຍກັນເຊັ່ນ: ການໃຊ້ເພງເກມ ແລະ ກິດຈະກຳການສື່ສານເພື່ອກະຕຸ້ນການຟັງ ແລະ ການເວົ້າພ້ອມທັງເພີ່ມການຝຶກອ່ານ ແລະ ການຂຽນຢ່າງເປັນຂັ້ນຕອນ ຈາກງ່າຍໄປຫາຍາກ.

### 5.2 ຂໍ້ສະເໜີຕໍ່ການນຳເອົາຜົນການວິໄຈໄປນຳໃຊ້

ຜູ້ທີ່ຈະນຳຜົນການຄົ້ນຄວ້ານີ້ໄປນຳໃຊ້ ຄວນໃຫ້ຄວາມສຳຄັນກັບການພັດທະນາຄູຜູ້ສອນ ໂດຍການສົ່ງເສີມຄວາມຮູ້ດ້ານວິທີການສອນພາສາອັງກິດຢ່າງມີວິຈາລະນະຍານ ແລະ ການຈັດກິດຈະກຳທີ່ເນັ້ນໃຫ້ນັກຮຽນມີສ່ວນຮ່ວມຢ່າງແທ້ຈິງ ເພື່ອໃຫ້ນັກຮຽນສາມາດນຳຄວາມຮູ້ພາສາອັງກິດໄປນຳໃຊ້ໃນສະຖານະການຈິງໄດ້ຢ່າງມີປະສິດທິຜົນ.

## 6. ຂໍ້ຂັດແຍ່ງ

ຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າວິທະຍາສາດ ຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນ ໜຶ່ງ, ກໍລະນີມີການລະເມີດ ໃນຮູບການໃດໜຶ່ງ ຂ້າພະເຈົ້າມີຄວາມຍິນດີ ທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

## 7. ເອກະສານອ້າງອີງ


ກະຊວງສຶກສາທິການ ແລະ ກິລາ. (2025). *ຄຳສັ່ງການຈັດຕັ້ງປະຕິບັດຫຼັກສູດສາຍສາມັນສຶກສາ ປະຈຳສົກຮຽນ 2025-2026.*

ຫ້ອງການສຶກສາທິການ ແລະ ກິລາ ນະຄອນຫຼວງພະບາງ. (2025). *ບົດສະຫຼຸບ ການຈັດຕັ້ງປະຕິບັດແຜນພັດທະນາການສຶກສາ ປະຈຳສົກຮຽນ 2024-2025.* ນະຄອນຫຼວງພະບາງ.

ລັດທະຍອດ, ຄ. (2023). *ຂ່າວສານປະເທດລາວ.* Retrieved from https://kpl.gov.la/detail.aspx?id= 76893

Anchalee, M. (2025). *The Development of English Conversational Speaking Skills Using Task-Based Learning for Prathom Suksa 5 Students at Thasatoi Municipal School.* Mahamakut Buddhist University.

Ang, D. (2015). *Teaching English in Laos.* Hawaii Pacific University TESOL Working Paper Series 13, 100-104. https://www.hpu.edu/research-publications/tesol-working-papers/2015/11Ang2015Laos.pdf.

Chirandon, A., Daitam, R., Umamong, W., & Madlaeh, R. (2021). An investigation of the English listening skill problems and needs to improve English listening skills of tertiary students. *Journal of Research and Development Institute, Songkhla Rajabhat University.*

HATSADY, S. (2022). Learning and teaching French reading for main ideas by using KWL PLUS technique for year 2 French students, 12+4 system at Luang Prabang Teacher Training College. *Souphanouvong University Journal Multidisciplinary Research and Development, 8*(1), 136–143. https://www.su-journal.com/index.php/su/article/view/178

Kongchun, P. (2015). *Statistics for Research.* : Chulalongkorn University Press.

Luangsuwan, T., Ritthikhup, W., Sihamat, L., & Khongcharoen, E. (2023). A study of problems and needs in critical English reading instruction among upper secondary school students. *Western University Research Journal of Humanities and Social Science, 9*(1), 65–78. https://so04.tci-thaijo.org/index.php/WTURJ/article/view/263477

Manakit, B. (2022). *The Development of english speaking skills by using the cooperative learning technique for grade 9 students in Prankrataipittayakom, Kamphaengphet Province.* Naresuan University.

Ministry of Education and sports. (2022). *ຄູ່ມືຄູພາສາອັງກິດ ຊັ້ນປະຖົມ.* Australian Government.

Nurnaningrum, G., Musthafa, B., Sopandi, W., Sujana, A., & Astuti, I. A. (2025). The analysis of elementary school students' descriptive writing skills in EFL. *Mimbar Sekolah Dasar, 12*(2), 377–396. https://doi.org/https://doi.org/10.53400/mimbar-sd.v12i2.87667

Phattharaphong-olan, C. (2018). *The development of English reading skills of first-year vocational certificate students at Atthawit Technological College through the use of article reading exercises.* Atthawit Commercial Technological College.

Phonphotthanamat, N. (2021). Comparative Study of Verifying the Content Validity of a Research Instrument with the IOC, CVR and CVI. 168-192. https://shorturl.at/qS2SN

Sisaat, B. (2012). *Basic Research.* Bangkok: Suwiriyasan.

Sisaat, B. (2017). *The preliminary reseach.* Bangkok: Suwiriyasan.

Soratat, K., Sridabuth, C., Chaiyaraj, A., Pomin, T., & Khachornsaengcharoen, N. (2022). The development of English listening skill through English songs of the third year students in English teaching program at Mahamakut Buddhist University, Roi Et Campus. *Journal of Buddhist Philosophy Evolved, 6*(2), 551–565.

Thaosiri, S., Ninnuan, K., Jaturanon, W., & Chanchoengyattachai, S. (2024). Study of Problems and Needs in Organizing English Language Learning to Promote Knowledge of Academic Vocabulary for Prathomsuksa 4. *Journal of Education, Burapha University, 35*(3), 114–125. https://so02.tci-thaijo.org/index.php/edubuu/article/view/274223

Wongwanich, S. (2013). *Research Statistics.* Chulalongkorn University Press.

ຕາຕະລາງ 1. ຄຸນລັກສະນະສ່ວນຕົວ

| ຂໍ້ມູນທົ່ວໄປ | ຈຳນວນ | ເປີເຊັນ (%) |
|---|---|---|
| 1) ເພດ | | |
| ຍິງ | 64 | 80 |
| ຊາຍ | 16 | 20 |
| ລວມ | 80 | 100 |
| 2) ວຸດທິການສຶກສາ | | |
| ຊັ້ນກາງ | 26 | 32.5 |
| ຊັ້ນສູງ | 44 | 55 |
| ຊັ້ນປະລິນຍາຕີ | 10 | 12.50 |
| ລວມ | 80 | 100 |
| 3) ປະສົບການສອນພາສາອັງກິດ | | |
| 1-10 ປີ | 52 | 65 |
| 11-20 ປີ | 20 | 25 |
| 21 ປີຂຶ້ນໄປ | 8 | 10 |
| ລວມ | 80 | 100 |
| 4) ຝຶກອົບຮົມ | | |
| ເຄີຍ | 72 | 90 |
| ບໍ່ເຄີຍ | 8 | 10 |
| ລວມ | 80 | 100 |

ຕາຕະລາງ 2. ຜົນການວິເຄາະສະພາບການຮຽນ-ການສອນ

| ລ.ດ | ເນື້ອໃນແຕ່ລະດ້ານ | ຄະແນນ | | ແປຜົນ |
|---|---|---|---|---|
| | | $\overline{X}$ | S.D | |
| 1 | ດ້ານການຟັງ | 3.60 | 0.77 | ດີ |
| 2 | ດ້ານການເວົ້າ | 3.30 | 0.67 | ປານກາງ |
| 3 | ດ້ານການອ່ານ | 3.24 | 0.87 | ປານກາງ |
| 4 | ດ້ານການຂຽນ | 2.47 | 0.68 | ໜ້ອຍ |
| | **ລວມ** | **3.15** | **0.75** | **ປານກາງ** |